ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງເຕັກໂນໂລຊີ ແລະ ການສື່ສານ
ກົມໄປສະນີ

ເລກທີ 266 /ກປນ
ນະຄອນຫລວງວຽງຈັນ, ວັນທີ 20 ສິງຫາ 2021

# ຄຳແນະນຳ
## ວ່າດ້ວຍການເກັບຄ່າທຳນຽມ ແລະ ຄ່າບໍລິການຂະແໜງການໄປສະນີ

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມໄປສະນີ, ເລກທີ 2798/ປທສ, ລົງວັນທີ 16 ຕຸລາ 2018.
- ອີງຕາມ ລັດຖະບັນຍັດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ຂອງປະທານປະເທດ, ເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021, ມາດຕາ 30 ແລະ 31.

1. ຈຸດປະສົງ

ຄຳແນະນຳສະບັບນີ້ວາງອອກ ເພື່ອເປັນບ່ອນອີງໃຫ້ແກ່ຂະແໜງການໄປສະນີ ຂັ້ນສູນກາງ ແລະ ທ້ອງຖິ່ນ ເກັບຄ່າທຳນຽມ ແລະ ຄ່າບໍລິການ ຂອງຂະແໜງການໄປສະນີ ທີ່ກຳນົດໄວ້ ໃນລັດຖະບັນຍັດຂອງປະທານປະເທດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021 ໃຫ້ມີຄວາມເປັນເອກະພາບ, ຄົບຖ້ວນ ແລະ ຖືກຕ້ອງ ທົ່ວປະເທດ, ແນໃສ່ມອບລາຍຮັບຈາກການເກັບຄ່າທຳນຽມ ແລະ ຄ່າບໍລິການດັ່ງກ່າວເຂົ້າງົບປະມານ ຕາມຂະແໜງການທີ່ຕົນຮັບຜິດຊອບ.

2. ຄ່າທຳນຽມ ແລະ ຄ່າບໍລິການ

ຄ່າທຳນຽມ ແມ່ນຄ່າສິດຄຸ້ມຄອງລັດ ທີ່ເກັບເປັນເງິນຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເຄື່ອນໄຫວທາງດ້ານເສດຖະກິດ ແລະ ສັງຄົມ ໂດຍຜ່ານຂະແໜງການຂອງລັດ ດ້ວຍການຢັ້ງຢືນ ແລະ/ຫຼື ອະນຸຍາດ.

ຄ່າບໍລິການ ແມ່ນຄ່າບໍລິຫານທາງດ້ານວິຊາການ ທີ່ເກັບເປັນເງິນຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃນການໃຊ້ບໍລິການຂອງຂະແໜງການລັດທີ່ເຄື່ອນໄຫວຮັບໃຊ້ສັງຄົມ ໂດຍບໍ່ຫວັງຜົນກຳໄລ ແລະ ເປັນການຊ່ວຍໜູນ ການໃຊ້ຈ່າຍງົບປະມານຂອງລັດ.

3. ອັດຕາຄ່າທຳນຽມຂະແໜງການໄປສະນີ

ອັດຕາຄ່າທຳນຽມຂະແໜງການໄປສະນີ ທີ່ໄດ້ກຳນົດໄວ້ໃນ ໝວດທີ 8, ມາດຕາ 30 ລັດຖະບັນຍັດຂອງປະທານປະເທດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021 ປະກອບມີ ດັ່ງນີ້:

3.1. ຄ່າທຳນຽມ ອອກໃບອະນຸຍາດດຳເນີນທຸລະກິດດ້ານໄປສະນີ:

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ອັດຕາ (ກີບ) |
|---|---|---|---|
| 1 | ສິ່ງເຄື່ອງໄປສະນີລະຫວ່າງປະເທດ: | | |
| 1.1 | ທາງອາກາດ ແລະ ພາກພື້ນ | ຄັ້ງ | 500.000 |

| | | | |
|---|---|---|---|
| 1.2 | ສະເພາະທາງພາກພື້ນ | ຄັ້ງ | 400.000 |
| 2 | ສິ່ງເຄື່ອງໄປສະນີກັບປະເທດໃດໜຶ່ງ: | | |
| 2.1 | ທາງອາກາດ ແລະ ພາກພື້ນ | ຄັ້ງ | 300.000 |
| 2.2 | ສະເພາະທາງພາກພື້ນ | ຄັ້ງ | 200.000 |
| 3 | ບໍລິການເປັນຕົວແທນ: | | |
| 3.1 | ຕົວແທນ ຂອງບໍລິສັດສິ່ງເຄື່ອງຂະແໜງການໄປສະນີຕ່າງປະເທດຢູ່ລາວ | ຄັ້ງ | 200.000 |
| 3.2 | ຕົວແທນ ຂອງບໍລິສັດສິ່ງເຄື່ອງຂະແໜງການໄປສະນີພາຍໃນປະເທດ | ຄັ້ງ | 50.000 |
| 4 | ສິ່ງເຄື່ອງໄປສະນີ ພາຍໃນແຂວງ | ຄັ້ງ | 50.000 |
| 5 | ຂໍ້ມູນຂ່າວສານ ແລະ ສິ່ງອຳນວຍຄວາມສະດວກທາງໄປສະນີ: | | |
| 5.1 | ບໍລິການ ຂໍ້ມູນຂ່າວສານ ແລະ ສິ່ງອຳນວຍຄວາມສະດວກທາງໄປສະນີ | ຄັ້ງ | 50.000 |
| 5.2 | ບໍລິການ ສະເພາະຂໍ້ມູນຂ່າວສານທາງໄປສະນີ | ຄັ້ງ | 30.000 |
| 5.3 | ບໍລິການ ສະເພາະສິ່ງອຳນວຍຄວາມສະດວກທາງໄປສະນີ | ຄັ້ງ | 20.000 |
| 6 | ການເງິນທາງໄປສະນີ: | | |
| 6.1 | ບໍລິການ ການເງິນທາງໄປສະນີ | ຄັ້ງ | 50.000 |
| 6.2 | ຕົວແທນບໍລິການ ການເງິນທາງໄປສະນີ | ຄັ້ງ | 20.000 |
| 7 | ຜະລິດ ແລະ ຈຳໜ່າຍຜະລິດຕະພັນໄປສະນີ | | |
| 7.1 | ບໍລິການ ຜະລິດ ແລະ ຈຳໜ່າຍຜະລິດຕະພັນໄປສະນີ | ຄັ້ງ | 50.000 |
| 7.2 | ບໍລິການ ຈຳໜ່າຍຜະລິດຕະພັນໄປສະນີ | ຄັ້ງ | 20.000 |

3.2. ຄ່າທຳນຽມ ອອກໃບຢັ້ງຢືນທີ່ຕັ້ງ, ພາຫະນະ ແລະ ໄປສະນີກອນ:

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ອັດຕາ (ກີບ) |
|---|---|---|---|
| 1 | ສູນຄັດແຍກເຄື່ອງໄປສະນີ: | | |
| 1.1 | ລະຫວ່າງປະເທດ | ຄັ້ງ | 35.000 |
| 1.2 | ພາຍໃນປະເທດ | ຄັ້ງ | 25.000 |
| 1.3 | ພາຍໃນແຂວງ | ຄັ້ງ | 15.000 |
| 2 | ປ່ອງບໍລິການ: | | |
| 2.1 | ປ່ອງບໍລິການໄປສະນີ | ຄັ້ງ | 10.000 |
| 2.2 | ຮ້ານຈຳໜ່າຍຜະລິດຕະພັນໄປສະນີ | ຄັ້ງ | 5.000 |
| 3 | ພາຫະນະສິ່ງເຄື່ອງໄປສະນີ: | | |
| 3.1 | ລະຫວ່າງປະເທດ | ຄັ້ງ | 15.000 |
| 3.2 | ພາຍໃນປະເທດ | ຄັ້ງ | 7.000 |
| 4 | ພາຫະນະແຈກຢາຍ: | | |
| 4.1 | ປະເພດລົດໃຫຍ່ | ຄັ້ງ | 3.000 |
| 4.2 | ປະເພດລົດຈັກ | ຄັ້ງ | 1.000 |
| 5 | ໄປສະນີກອນ | ຄັ້ງ | 1.000 |
| 6 | ສະແຕມໄປສະນີ | ຄັ້ງ | 40.000 |

3.3. ຄ່າທຳນຽມ ອອກໃບຢັ້ງຢືນກວດກາມາດຕະຖານ:

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ອັດຕາ (ກີບ) |
|---|---|---|---|
| 1 | ມາດຕະຖານສະຖານທີ່ໃຫ້ບໍລິການ | ຄັ້ງ | 50.000 |
| 2 | ມາດຕະຖານຄວາມປອດໄພ | ຄັ້ງ | 50.000 |
| 3 | ມາດຕະຖານເຕັກນິກຜະລິດຕະພັນ | ຄັ້ງ | 50.000 |
| 4 | ມາດຕະຖານການບໍລິການ | ຄັ້ງ | 50.000 |
| 5 | ມາດຕະຖານລະຫັດຂໍ້ມູນ | ຄັ້ງ | 50.000 |

4. ອັດຕາຄ່າບໍລິການຂະແໜງການໄປສະນີ

ອັດຕາຄ່າບໍລິການຂະແໜງໄປສະນີ ຕາມທີ່ໄດ້ກຳນົດໄວ້ໃນ ໝວດທີ 8, ມາດຕາ 31 ລັດຖະບັນຍັດຂອງປະທານປະເທດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021 ມີດັ່ງນີ້:

4.1. ຄ່າບໍລິການ ອຳນວຍຄວາມສະດວກໃຫ້ຜູ້ປະກອບການເຄື່ອນໄຫວຕາມສິດ, ຂອບເຂດ ແລະ ພັນທະການບໍລິການທີ່ໄດ້ຮັບອະນຸຍາດ:

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ອັດຕາ (ກີບ) |
|---|---|---|---|
| **1** | **ຜູ້ປະກອບການສິ່ງເຄື່ອງໄປສະນີພັນ:** | | |
| 1.1 | ລະຫວ່າງປະເທດທາງອາກາດ | ປີ | 2.000.000 |
| 1.2 | ລະຫວ່າງປະເທດທາງພາກພື້ນ | ປີ | 500.000 |
| 1.3 | ພາຍໃນປະເທດ | ປີ | 100.000 |
| 1.4 | ພາຍໃນແຂວງ | ປີ | 50.000 |
| **2** | **ຜູ້ປະກອບການສິ່ງເຄື່ອງພັດສະດຸໄປສະນີ:** | | |
| 2.1 | ລະຫວ່າງປະເທດທາງອາກາດ | ປີ | 4.000.000 |
| 2.2 | ລະຫວ່າງປະເທດທາງພາກພື້ນ | ປີ | 1.000.000 |
| 2.3 | ພາຍໃນປະເທດ | ປີ | 300.000 |
| 2.4 | ພາຍໃນແຂວງ | ປີ | 70.000 |
| **3** | **ຜູ້ປະກອບການສິ່ງເຄື່ອງໂລຊິດສະຕິກໄປສະນີ:** | | |
| 3.1 | ລະຫວ່າງປະເທດທາງອາກາດ | ປີ | 6.000.000 |
| 3.2 | ລະຫວ່າງປະເທດທາງພາກພື້ນ | ປີ | 2.000.000 |
| 3.3 | ພາຍໃນປະເທດ | ປີ | 500.000 |
| 3.4 | ພາຍໃນແຂວງ | ປີ | 90.000 |
| **4** | **ຜູ້ປະກອບການຂໍ້ມູນຂ່າວສານ ແລະ ສິ່ງອຳນວຍຄວາມສະດວກທາງໄປສະນີ:** | | |
| 4.1 | ຂໍ້ມູນຂ່າວສານ ແລະ ສິ່ງອຳນວຍຄວາມສະດວກທາງໄປສະນີ | ປີ | 80.000 |
| 4.2 | ສະເພາະຂໍ້ມູນຂ່າວສານທາງໄປສະນີ | ປີ | 60.000 |
| 4.3 | ສະເພາະສິ່ງອຳນວຍຄວາມສະດວກທາງໄປສະນີ | ປີ | 40.000 |
| **5** | **ຜູ້ປະກອບການການເງິນໄປສະນີ:** | | |
| 5.1 | ການເງິນໄປສະນີ | ປີ | 100.000 |

| | | | |
|---|---|---|---|
| 5.2 | ເປັນຕົວແທນບໍລິການການເງິນທາງໄປສະນີ | ປີ | 40.000 |
| 6 | ຜູ້ປະກອບການຜະລິດ ແລະ ຈຳໜ່າຍຜະລິດຕະພັນໄປສະນີ: | | |
| 6.1 | ຜະລິດ ແລະ ຈຳໜ່າຍຜະລິດຕະພັນໄປສະນີ | ປີ | 100.000 |
| 6.2 | ຈຳໜ່າຍຜະລິດຕະພັນໄປສະນີ | ປີ | 40.000 |

4.2. ຄ່າບໍລິການ ອອກໃບຢັ້ງຢືນທີ່ຕັ້ງ, ພາຫະນະ ແລະ ໄປສະນີກອນ:

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ອັດຕາ (ກີບ) |
|---|---|---|---|
| **1** | ໃບຢັ້ງຢືນທີ່ຕັ້ງ (ທີ່ຢູ່): | | |
| 1.1 | ສູນຄັດແຍກລະຫວ່າງປະເທດ | ປີ | 100.000 |
| 1.2 | ສູນຄັດແຍກພາຍໃນປະເທດ | ປີ | 50.000 |
| 1.3 | ສູນຄັດແຍກພາຍໃນແຂວງ | ປີ | 20.000 |
| 1.4 | ປ່ອງບໍລິການສາຂາຂອງຜູ້ປະກອບການທີ່ໄດ້ຮັບອະນຸຍາດແລ້ວ | ປີ | 10.000 |
| 1.5 | ຮ້ານຈຳໜ່າຍ ຂອງຜູ້ປະກອບການຂະແໜງ ການໄປສະນີ | ປີ | 5.000 |
| 1.6 | ຕົວແທນ ຂອງຜູ້ປະກອບການຂະແໜງການໄປສະນີ | ປີ | 5.000 |
| **2** | ໃບຢັ້ງຢືນພາຫະນະ: | | |
| 2.1 | ສິ່ງເຄື່ອງໄປສະນີລະຫວ່າງປະເທດ | ປີ | 20.000 |
| 2.2 | ສິ່ງເຄື່ອງໄປສະນີພາຍໃນປະເທດ | ປີ | 10.000 |
| 2.3 | ແຈກຢາຍປະເພດລົດໃຫຍ່ | ປີ | 5.000 |
| 2.4 | ແຈກຢາຍປະເພດລົດຈັກ | ປີ | 1.500 |
| **3** | ໃບຢັ້ງຢືນໄປສະນີກອນ ແລະ ສະແຕັມ: | | |
| 3.1 | ໄປສະນີກອນ ຫຼື ບູລຸດໄປສະນີ ຫຼື ພະນັກງານແຈກຢາຍ | ປີ | 1.000 |
| 3.2 | ກວດກາຮູບແບບສະແຕມໄປສະນີ (ຊຸດ) | ຊຸດ | 150.000 |

4.3. ຄ່າບໍລິການ ປະເມີນມາດຕະຖານ

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ອັດຕາ (ກີບ) |
|---|---|---|---|
| 1 | ປະເມີນມາດຕະຖານສະຖານທີ່ | ຄັ້ງ | 500.000 |
| 2 | ປະເມີນມາດຕະຖານຄວາມປອດໄພ | ຄັ້ງ | 300.000 |
| 3 | ປະເມີນມາດຕະຖານຜະລິດຕະພັນໄປສະນີ | ຄັ້ງ | 200.000 |
| 4 | ປະເມີນມາດຕະຖານຄວາມໄວບໍລິການ | ຄັ້ງ | 200.000 |
| 5 | ປະເມີນມາດຕະຖານຂໍ້ມູນຂ່າວສານການບໍລິການໄປສະນີ | ຄັ້ງ | 100.000 |

4.4. ຄ່າບໍລິການ ສະໜອງການນຳໃຊ້ເຕັກໂນໂລຊີໄປສະນີ

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ອັດຕາ (ກີບ) |
|---|---|---|---|
| 1 | ລະຫັດໄປສະນີພິເສດທີ່ອອກໃຫ້ຜູ້ຊົມໃຊ້ສະເພາະ | ປີ | 10.000 |
| 2 | ລະຫັດບາໂຄດ ຫຼື ຄິວອາໂຄດທີ່ເປັນການບໍລິການຂອງອົງການຄຸ້ມຄອງ | ລາຍການ | 50 |
| 3 | ລະບົບຕິດຕາມເຄື່ອງຝາກເປັນການບໍລິການຂອງອົງການຄຸ້ມຄອງ | ຫໍ່ | 100 |

5. ການແບ່ງຂັ້ນຄຸ້ມຄອງໃນການເກັບຄ່າທຳນຽມ ແລະ ຄ່າບໍລິການ

5.1. ຄ່າທຳນຽມ ແລະ ຄ່າບໍລິການທີ່ກົມໄປສະນີຄຸ້ມຄອງ:

♦ ຄ່າທຳນຽມ:

- ອະນຸຍາດ ສິ່ງເຄື່ອງໄປສະນີລະຫວ່າງປະເທດຕາມຂໍ້ 3.1 (ໃນຕາຕະລາງຂໍ້ 1 ແລະ ຂໍ້ 2).
- ອະນຸຍາດ ສິ່ງເຄື່ອງໄປສະນີພາຍໃນປະເທດ.
- ອະນຸຍາດ ເປັນຕົວແທນຂອງບໍລິສັດສິ່ງເຄື່ອງໄປສະນີຕ່າງປະເທດຢູ່ລາວຕາມຂໍ້ 3.1 (ໃນຕາຕະລາງຂໍ້ 3.1).
- ອະນຸຍາດ ບໍລິການການເງິນທາງໄປສະນີຕາມຂໍ້ 3.1 (ໃນຕາຕະລາງຂໍ້ 6).
- ອະນຸຍາດ ບໍລິການຜະລິດ ແລະ ຈຳໜ່າຍຜະລິດຕະພັນໄປສະນີຕາມຂໍ້ 3.1 (ໃນຕາຕະລາງຂໍ້ 7).
- ໃບຢັ້ງຢືນ ສູນຄັດແຍກເຄື່ອງໄປສະນີລະຫວ່າງປະເທດ ແລະ ພາຍໃນປະເທດ ຕາມຂໍ້ 3.2 (ໃນຕາຕະລາງຂໍ້ 1.1 ແລະ 1.2).
- ໃບຢັ້ງຢືນ ພາຫະນະຂົນສົ່ງລະຫວ່າງປະເທດແລະພາຍໃນປະເທດຕາມຂໍ້ 3.2 (ໃນຕາຕະລາງຂໍ້ 3).
- ໃບຢັ້ງຢືນ ຮັບຮອງຮູບແບບສະແຕມໄປສະນີ ຕາມຂໍ້ 3.2 (ໃນຕາຕະລາງຂໍ້ 6).
- ໃບຢັ້ງຢືນ ກວດກາມາດຕະຖານສະຖານທີ່ສູນຄັດແຍກລະຫວ່າງປະເທດ ແລະ ພາຍໃນປະເທດ.
- ໃບຢັ້ງຢືນ ກວດກາມາດຕະຖານຄວາມປອດໄພຂອງສູນຄັດແຍກລະຫວ່າງປະເທດ ແລະ ພາຍໃນປະເທດ.
- ໃບຢັ້ງຢືນ ກວດກາມາດຕະຖານຄວາມໄວບໍລິການລະຫວ່າງປະເທດ ແລະ ພາຍໃນປະເທດ.
- ໃບຢັ້ງຢືນ ກວດກາມາດຕະຖານບໍລິການເຕັກນິກຜະລິດຕະພັນໄປສະນີ.
- ໃບຢັ້ງຢືນ ກວດກາມາດຕະຖານລະຫັດຂໍ້ມູນ.

♦ ຄ່າບໍລິການ

- ຜູ້ປະກອບການ ສິ່ງເຄື່ອງໄປສະນີພັນລະຫວ່າງປະເທດທາງອາກາດ, ທາງພາກພື້ນ ແລະ ພາຍໃນປະເທດຕາມຂໍ້ 4.1 (ໃນຕາຕະລາງຂໍ້ 1.1, ຂໍ້ 1.2 ແລະ ຂໍ້ 1.3).
- ຜູ້ປະກອບການ ສິ່ງເຄື່ອງພັດສະດຸໄປສະນີລະຫວ່າງປະເທດທາງອາກາດ, ທາງພາກພື້ນ ແລະ ພາຍໃນປະເທດຕາມຂໍ້ 4.1 (ໃນຕາຕະລາງຂໍ້ 2.1, ຂໍ້ 2.2 ແລະ ຂໍ້ 2.3).
- ຜູ້ປະກອບການ ສິ່ງເຄື່ອງໂລຊິດສະຕິກໄປສະນີລະຫວ່າງປະເທດທາງອາກາດ, ທາງພາກພື້ນ ແລະ ພາຍໃນປະເທດຕາມຂໍ້ 4.1 (ໃນຕາຕະລາງຂໍ້ 3.1, ຂໍ້ 3.2 ແລະ ຂໍ້ 3.3).
- ຜູ້ປະກອບການ ການເງິນໄປສະນີຕາມຂໍ້ 4.1 (ໃນຕາຕະລາງ ຂໍ້ 5).
- ຜູ້ປະກອບການ ຜະລິດ ແລະ ຈຳໜ່າຍຜະລິດຕະພັນໄປສະນີຕາມຕາຕະລາງ 4.1 (ໃນຕາຕະລາງຂໍ້ 6).
- ໃບຢັ້ງຢືນ ທີ່ຕັ້ງສູນຄັດແຍກລະຫວ່າງປະເທດ, ສູນຄັດແຍກພາຍໃນປະເທດຕາມຂໍ້ 4.2 (ໃນຕາຕະລາງຂໍ້ 1.1 ແລະ 1.2).
- ໃບຢັ້ງຢືນ ພາຫະນະສິ່ງເຄື່ອງໄປສະນີລະຫວ່າງປະເທດ, ພາຍໃນປະເທດຕາມຂໍ້ 4.2 (ໃນຕາຕະລາງຂໍ້ 2.1 ແລະ 2.2).
- ໃບຢັ້ງຢືນ ກວດກາຮູບແບບສະແຕມໄປສະນີ ຕາມຂໍ້ 4.2 (ໃນຕາຕະລາງຂໍ້ 3.2).
- ປະເມີນມາດຕະຖານ ຜະລິດຕະພັນໄປສະນີ, ມາດຕະຖານຄວາມໄວບໍລິການ ຕາມຂໍ້ 4.3 (ໃນຕາຕະລາງຂໍ້ 3 ແລະ ຂໍ້ 4).
- ກວດກາມາດຕະຖານ ສະຖານທີ່ສູນຄັດແຍກລະຫວ່າງປະເທດ ແລະ ພາຍໃນປະເທດ.
- ກວດກາມາດຕະຖານ ຄວາມປອດໄພຂອງສູນຄັດແຍກລະຫວ່າງປະເທດ ແລະ ພາຍໃນປະເທດ.

- ກວດກາມາດຕະຖານ ຄວາມໄວບໍລິການລະຫວ່າງປະເທດ ແລະ ພາຍໃນປະເທດ.
- ກວດກາມາດຕະຖານ ບໍລິການເຕັກນິກຜະລິດຕະພັນໄປສະນີ.
- ກວດກາມາດຕະຖານ ຂໍ້ມູນຂ່າວສານການບໍລິການໄປສະນີ.
- ລະຫັດໄປສະນີພິເສດທີ່ອອກໃຫ້ຜູ້ຊົມໃຊ້ສະເພາະ ຕາມຂໍ້ 4.4 (ໃນຕາຕະລາງຂໍ້ 1).
- ລະຫັດບາໂຄດ ຫຼື ຄິວອາໂຄດທີ່ເປັນການບໍລິການຂອງອົງການຄຸ້ມຄອງຕາມຂໍ້ 4.4 (ຕາຕະລາງຂໍ້ 2).
- ລະບົບຕິດຕາມເຄື່ອງຝາກເປັນການບໍລິການຂອງອົງການຄຸ້ມຄອງ ຕາມຂໍ້ 4.4 (ໃນຕາຕະລາງຂໍ້ 3).

**5.2.** ຄ່າທຳນຽມ ແລະ ຄ່າບໍລິການ ທີ່ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ/ນະຄອນຫຼວງຄຸ້ມຄອງ

♦ ຄ່າທຳນຽມ

- ອະນຸຍາດ ເປັນຕົວແທນ ຂອງບໍລິສັດ (ຄົນລາວ) ສົ່ງເຄື່ອງຂະແໜງການໄປສະນີພາຍໃນປະເທດ ຕາມຂໍ້ 3.1 (ຕາ ຕະລາງຂໍ້ 3.2).
- ອະນຸຍາດ ສົ່ງເຄື່ອງໄປສະນີ ພາຍໃນແຂວງຕາມຂໍ້ 3.1 (ໃນຕາຕະລາງ ຂໍ້ 4).
- ອະນຸຍາດ ບໍລິການຂໍ້ມູນຂ່າວສານ ແລະ ສິ່ງອຳນວຍຄວາມສະດວກທາງໄປສະນີຕາມຂໍ້ 3.1 (ໃນຕາຕະລາງ ຂໍ້ 5.2 ແລະ ຂໍ້ 5.3).
- ອະນຸຍາດ ບໍລິການຈຳໜ່າຍຜະລິດຕະພັນໄປສະນີ ຂໍ້ 3.1 (ໃນຕາຕະລາງຂໍ້ 7.2).
- ໃບຢັ້ງຢືນ ສູນຄັດແຍກເຄື່ອງໄປສະນີພາຍໃນແຂວງຕາມຂໍ້ 3.2 (ໃນຕາຕະລາງຂໍ້ 1.3).
- ໃບຢັ້ງຢືນ ປ້ອງບໍລິການໄປສະນີຕາມຂໍ້ 3.2 (ໃນຕາຕະລາງຂໍ້ 2).
- ໃບຢັ້ງຢືນ ຮ້ານຈຳໜ່າຍຜະລິດຕະພັນໄປສະນີຕາມຂໍ້ 3.2 (ໃນຕາຕະລາງຂໍ້ 2).
- ໃບຢັ້ງຢືນ ພາຫະນະແຈກຢາຍປະເພດລົດໃຫຍ່, ລົດຈັກຕາມຂໍ້ 3.2 (ໃນຕາຕະລາງຂໍ້ 4).
- ໃບຢັ້ງຢືນ ໄປສະນີກອນຕາມຂໍ້ 3.2 (ໃນຕາຕະລາງຂໍ້ 5).
- ມາດຕະຖານສະຖານທີ່ ສູນຄັດແຍກພາຍໃນແຂວງ, ປ້ອງບໍລິການ, ຫ້ອງການຕົວແທນຈຳໜ່າຍ ຫຼື ເຟຣນຊາຍ.
- ມາດຕະຖານຄວາມປອດໄພ ຂອງສູນຄັດແຍກພາຍໃນແຂວງ, ປ້ອງບໍລິການ, ຫ້ອງການຕົວແທນຈຳໜ່າຍ ຫຼື ເຟຣນຊາຍ.
- ມາດຕະຖານຕະຖານບໍລິການ ຂອງສູນຄັດແຍກພາຍໃນແຂວງ, ປ້ອງບໍລິການ ແລະ ຫ້ອງການຕົວແທນຈຳໜ່າຍ ຫຼື ເຟຣນຊາຍ.

♦ ຄ່າບໍລິການ

- ຜູ້ປະກອບການ ສົ່ງເຄື່ອງພາຍໃນແຂວງຕາມຂໍ້ 4.1 (ໃນຕາຕະລາງຂໍ້ 1.4).
- ຜູ້ປະກອບການ ຂໍ້ມູນຂ່າວສານ ແລະ ສິ່ງອຳນວຍຄວາມສະດວກທາງໄປສະນີຕາມຂໍ້ 4.1 (ຕາຕະລາງຂໍ້ 4)
- ຜູ້ປະກອບການ ຈຳໜ່າຍຜະລິດຕະພັນໄປສະນີຕາມຂໍ້ 4.1 (ໃນຕາຕະລາງຂໍ້ 6.2).
- ໃບຢັ້ງຢືນ ທີ່ຕັ້ງສູນຄັດແຍກພາຍໃນແຂວງ, ປ້ອງບໍລິການສາຂາຂອງຜູ້ປະກອບການທີ່ໄດ້ຮັບອະນຸຍາດແລ້ວ, ຮ້ານຈຳໜ່າຍ ຂອງຜູ້ປະກອບການຂະແໜງການໄປສະນີ, ຕົວແທນຂອງຜູ້ປະກອບການຂະແໜງການໄປສະນີຕາມຂໍ້ 4.2 (ໃນຕາຕະລາງຂໍ້ 1.3, ຂໍ້ 1.4, ຂໍ້ 1.5 ແລະ 1.6).
- ໃບຢັ້ງຢືນ ພາຫະນະແຈກຢາຍປະເພດລົດໃຫຍ່ ແລະ ລົດຈັກຕາມຂໍ້ 4.2 (ຕາຕະລາງຂໍ້ 2.3 ແລະ 2.4).
- ໃບຢັ້ງຢືນ ໄປສະນີກອນ, ບູລຸດໄປສະນີ, ພະນັກງານແຈກຢາຍຕາມຂໍ້ 4.2 (ໃນຕາຕະລາງຂໍ້ 3.1).
- ປະເມີນມາດຕະຖານ ສະຖານທີ່ຂອງສູນຄັດແຍກພາຍໃນແຂວງ, ປ້ອງບໍລິການສາຂາ ແລະ ຫ້ອງການຕົວແທນ ຫຼື ເຟຣນຊາຍ.

- ປະເມີນມາດຕະຖານ ຄວາມປອດໄພຂອງສູນຄັດແຍກພາຍໃນແຂວງ, ປ້ອງບໍລິການສາຂາ ແລະ ຫ້ອງການຕົວແທນ ຫຼື ເຟຣນຊາຍ.
- ປະເມີນມາດຕະຖານ ຂໍ້ມູນຂ່າວສານ ການບໍລິການໄປສະນີ ຂອງສູນຄັດແຍກພາຍໃນແຂວງ, ປ້ອງບໍລິການສາຂາ ແລະ ຫ້ອງການຕົວແທນ ຫຼື ເຟຣນຊາຍ.

6. ອະທິບາຍເພີ່ມບາງລາຍການ

ເພື່ອຄວາມເຂົ້າໃຈເປັນເອກະພາບໃນການຈັດຕັ້ງປະຕິບັດ

- ສໍາລັບຄ່າທໍານຽມທີ່ລະບຸຢູ່ໃນ ຂໍ້ 3.1 ແລະ 3.2 ແມ່ນເກັບເປັນປີ ສ່ວນຄ່າທໍານຽມໃນຂໍ້ 3.3 ແມ່ນເກັບເປັນຄັ້ງ ໂດຍພາຍໃນ 1 ປີ ສາມາດ ເກັບໄດ້ບໍ່ໃຫ້ເກີນ 1 ຄັ້ງ.
- ສໍາລັບຄ່າບໍລິການທີ່ລະບຸຂໍ້ 4.1 ແລະ 4.2 ແມ່ນຈະຕ້ອງໄດ້ສໍາລະເປັນປີ; ຄ່າບໍລິການ ໃນຂໍ້ 4.3 ແມ່ນເກັບເປັນຄັ້ງ ໂດຍພາຍໃນ 1 ປີ ສາມາດເກັບໄດ້ບໍ່ໃຫ້ເກີນ 1 ຄັ້ງ.
- ການຄິດໄລ່ເກັບຄ່າບໍລິການຜູ້ປະກອບການທີ່ຂໍດໍາເນີນທຸລະກິດບໍລິການສິ່ງເຄື່ອງໂລຈິດສະຕິກ, ພັດສະດຸໄປສະນີ ແລະ ໄປສະນີພັນ ນໍາກັນ ແມ່ນໃຫ້ຄິດໄລ່ເກັບແຕ່ອັດຕາຄ່າບໍລິການສິ່ງເຄື່ອງໂລຊິດສະຕິກ.
- ການຄິດໄລ່ເກັບຄ່າບໍລິການ ຜູ້ປະກອບການທີ່ຂໍດໍາເນີນທຸລະກິດບໍລິການສິ່ງເຄື່ອງພັດສະດຸໄປສະນີ ແລະ ໄປສະນີພັນນໍາກັນ ແມ່ນໃຫ້ຄິດໄລ່ເກັບແຕ່ອັດຕາຄ່າບໍລິການສິ່ງເຄື່ອງຂອງພັດສະດຸໄປສະນີ.
- ສໍາລັບຜູ້ປະກອບການໃດທີ່ໄດ້ເສຍຄ່າທໍານຽມ ແລະ ຄ່າບໍລິການຂອງໃບອະນຸຍາດການບໍລິການສິ່ງເຄື່ອງພາຍໃນປະເທດໃຫ້ກົມໄປສະນີແລ້ວ ບໍ່ຈໍາເປັນຕ້ອງໄດ້ເສຍຄ່າທໍານຽມ ແລະ ຄ່າບໍລິການ ຂອງໃບອະນຸຍາດສິ່ງເຄື່ອງພາຍໃນແຂວງໃຫ້ກັບພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ/ນະຄອນຫຼວງອີກ.
- ສໍາລັບການເກັບຄ່າທໍານຽມ ແລະ ຄ່າບໍລິການ ອອກໃບຢັ້ງຢືນປ້ອງບໍລິການສາຂາຂອງຜູ້ປະກອບການທີ່ໄດ້ຮັບອະນຸຍາດແລ້ວ ແມ່ນໃຫ້ເກັບເປັນປີ ເຊິ່ງສະຖານທີ່ໃດທີ່ມີບໍລິການຮັບຝາກ ແລະ/ຫຼື ແຈກຢາຍເຄື່ອງຝາກ ແມ່ນຖືວ່າເປັນປ້ອງບໍລິການ (ພາຍໃນເມືອງໜຶ່ງ ຫຼື ແຂວງໜຶ່ງແມ່ນອາດຈະມີຫຼາຍປ້ອງ).
- ສໍາລັບການຄິດໄລ່ເກັບຄ່າທໍານຽມດໍາເນີນທຸລະກິດສິ່ງເຄື່ອງພາຍໃນປະເທດໃຫ້ຄິດໄລ່ເກັບຄືກັບອັດຕາຄ່າທໍານຽມເປັນຕົວແທນຂອງບໍລິສັດສິ່ງເຄື່ອງຂະແໜງການໄປສະນີພາຍໃນປະເທດເທົ່າກັບ 50.000 ກີບ/ປີ.
- ສໍາລັບການຄິດໄລ່ເກັບຄ່າທໍານຽມອະນຸຍາດດໍາເນີນທຸລະກິດບໍລິການສິ່ງເຄື່ອງພາຍໃນແຂວງ ພາຍຫຼັງທີ່ເຄື່ອນໄຫວແລ້ວ ໄດ້ຂະຫຍາຍສາຂາໄປແຂວງຕ່າງໆເກີນ 3 ແຂວງ. ໃນປີຖັດໄປຕ້ອງໄປ ຜູ້ປະກອບການສາມາດຍົກລະດັບຈາກການໄດ້ຮັບອະນຸຍາດພາຍໃນແຂວງໄປເປັນອະນາຍາດພາຍໃນປະເທດ ຊຶ່ງຂຶ້ນກັບການຄຸ້ມຄອງຂອງກົມໄປສະນີ ໂດຍຈະໄດ້ປ່ຽນໃບອະນຸຍາດເປັນບໍລິການສິ່ງເຄື່ອງພາຍໃນປະເທດ ສ່ວນການເສຍຄ່າທໍານຽມ ແລະ ບໍລິການຂອງໃບອະນຸຍາດ ໃຫ້ກັບກົມໄປສະນີປ່ອນດຽວ.

7. ວິທີການຄິດໄລ່ຄ່າທໍານຽມ ແລະ ຄ່າບໍລິການ

<u>ກໍລະນີ 1:</u> ບໍລິສັດທີ່ໄດ້ຮັບອະນຸຍາດດໍາເນີນທຸລະກິດຈາກກົມໄປສະນີ (Courier, express) ທີ່ໄດ້ຂະຫຍາຍສາຂາ ແລະ ມີຕົວແທນໃຫ້ບໍລິການຂອງຕົນຢູ່ບັນດາແຂວງ ຈະຕ້ອງໄດ້ເສຍຄ່າທໍານຽມ ແລະ ຄ່າບໍລິການໃຫ້ກົມໄປສະນີ ແລະ ພະແນກເຕັກໂນໂລຊີ ແລະ ການສື່ສານ ບັນດາແຂວງ ດັ່ງນີ້:

ຕົວຢ່າງ 1: ບໍລິສັດ DHL ໄດ້ຮັບອະນຸຍາດດໍາເນີນທຸລະກິດບໍລິການສິ່ງເຄື່ອງໂລຊິດສະຕິກໄປສະນີ ລະຫວ່າງປະເທດທາງອາກາດ ຈາກກົມໄປສະນີ ແລະ ຂະຫຍາຍສາຂາໄປແຂວງອັດຕະປື.

♦ ຄ່າທຳນຽມ ແລະ ຄ່າບໍລິການທີ່ຕ້ອງຈ່າຍປົກກະຕິໃນແຕ່ລະປີ:

ກ. ກົມໄປສະນີເກັບ:

| | | |
|---|---|---|
| - ຄ່າທຳນຽມ ໃບອະນຸຍາດດຳເນີນທຸລະກິດສິ່ງເຄື່ອງລະຫວ່າງປະເທດທາງອາກາດ | = | 500.000 ກີບ |
| - ຄ່າທຳນຽມ ໃບຢັ້ງຢືນ ສູນຄັດແຍກລະຫວ່າງປະເທດ | = | 35.000 ກີບ |
| - ຄ່າທຳນຽມ ໃບຢັ້ງຢືນ ພາຫະນະຂົນສົ່ງພາຍໃນປະເທດ 5 ຄັນ | = | 35.000 ກີບ |
| - ຄ່າບໍລິການ ສິ່ງເຄື່ອງໂລຊິດສະຕິກລະຫວ່າງປະເທດທາງອາກາດ | = | 6.000.000 ກີບ |
| - ຄ່າບໍລິການ ໃບຢັ້ງຢືນສູນຄັດແຍກລະຫວ່າງປະເທດ | = | 100.000 ກີບ |
| - ຄ່າບໍລິການ ໃບຢັ້ງຢືນພາຫະນະສິ່ງເຄື່ອງພາຍໃນປະເທດ 5 ຄັນ | = | 50.000 ກີບ |
| ລວມຄ່າທຳນຽມ ແລະ ຄ່າບໍລິການທີ່ກົມ ເກັບ | = | **6.720.000** ກີບ |

ຂ. ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງອັດຕະປືເກັບ

| | | |
|---|---|---|
| - ຄ່າທຳນຽມ ໃບຢັ້ງຢືນປ່ອງບໍລິການສາຂາ 20 ປ່ອງ | = | 200.000 ກີບ |
| - ຄ່າທຳນຽມ ໃບຢັ້ງຢືນພາຫະນະແຈກຢາຍລົດໃຫຍ່ 2 ຄັນ | = | 6.000 ກີບ |
| - ຄ່າທຳນຽມ ໃບຢັ້ງຢືນພາຫະນະແຈກຢາຍລົດຈັກ 5 ຄັນ | = | 5.000 ກີບ |
| - ຄ່າທຳນຽມ ໃບຢັ້ງຢືນພະນັກງານແຈກຢາຍ 10 ຄົນ | = | 10.000 ກີບ |
| - ຄ່າບໍລິການ ໃບຢັ້ງຢືນປ່ອງບໍລິການສາຂາຢູ່ແຂວງ 20 ປ່ອງ | = | 200.000 ກີບ |
| - ຄ່າບໍລິການ ໃບຢັ້ງຢືນພາຫະນະແຈກຢາຍລົດໃຫຍ່ 2 ຄັນ | = | 10.000 ກີບ |
| - ຄ່າບໍລິການ ໃບຢັ້ງຢືນພາຫະນະແຈກຢາຍລົດຈັກ 5 ຄັນ | = | 7.500 ກີບ |
| - ຄ່າບໍລິການ ໃບຢັ້ງຢືນພະນັກງານແຈກຢາຍ 10 ຄົນ | = | 10.000 ກີບ |
| ລວມຄ່າທຳນຽມ ແລະ ຄ່າບໍລິການ ທີ່ ແຂວງອັດຕະປື ເກັບ | = | **448.500** ກີບ |

ຕົວຢ່າງ 2: ບໍລິສັດຮຸ່ງອາລຸນ ໄດ້ຮັບອະນຸຍາດດຳເນີນທຸລະກິດບໍລິການສິ່ງເຄື່ອງໂລຊິດສະຕິກໄປສະນີ ທັງພາຍໃນ ແລະ ຕ່າງປະເທດທາງພາກພື້ນ ຈາກກົມໄປສະນີ ແລະ ຂະຫຍາຍສາຂາໄປແຂວງອັດຕະປື.

♦ ຄ່າທຳນຽມ ແລະ ຄ່າບໍລິການທີ່ຕ້ອງຈ່າຍປົກກະຕິໃນແຕ່ລະປີ

ກ. ກົມໄປສະນີ:

| | | |
|---|---|---|
| ຄ່າທຳນຽມ ໃບອະນຸຍາດດຳເນີນທຸລະກິດ ສິ່ງເຄື່ອງລະຫວ່າງປະເທດທາງພາກພື້ນ | = | 400.000 ກີບ |
| ຄ່າທຳນຽມ ໃບອະນຸຍາດດຳເນີນທຸລະກິດ ສິ່ງເຄື່ອງພາຍໃນປະເທດ | = | 50.000 ກີບ |
| ຄ່າທຳນຽມ ໃບຢັ້ງຢືນສູນຄັດແຍກລະຫວ່າງປະເທດ 2 ສູນ | = | 70.000 ກີບ |
| ຄ່າທຳນຽມ ໃບຢັ້ງຢືນສູນຄັດແຍກພາຍໃນປະເທດ 3 ສູນ | = | 75.000 ກີບ |
| ຄ່າທຳນຽມ ໃບຢັ້ງຢືນພາຫະນະຂົນສົ່ງລະຫວ່າງປະເທດ 5 ຄັນ | = | 75.000 ກີບ |
| ຄ່າທຳນຽມ ໃບຢັ້ງຢືນພາຫະນະຂົນສົ່ງພາຍໃນປະເທດ 10 ຄັນ | = | 70.000 ກີບ |
| ຄ່າບໍລິການ ຜູ້ປະກອບການສິ່ງເຄື່ອງໂລຊິດສະຕິກລະຫວ່າງປະເທດທາງພາກພື້ນ | = | 2.000.000 ກີບ |
| ຄ່າບໍລິການ ຜູ້ປະກອບການສິ່ງເຄື່ອງໂລຊິດສະຕິກພາຍໃນປະເທດ | = | 500.000 ກີບ |
| ຄ່າບໍລິການ ໃບຢັ້ງຢືນ ສູນຄັດແຍກລະຫວ່າງປະເທດ 2 ສູນ | = | 200.000 ກີບ |
| ຄ່າບໍລິການ ໃບຢັ້ງຢືນ ສູນຄັດແຍກພາຍໃນປະເທດ 3 ສູນ | = | 150.000 ກີບ |

| | | |
|---|---|---|
| ຄ່າທຳນຽມ ໃບຢັ້ງຢືນ ພາຫະນະຂົນສົ່ງລະຫວ່າງປະເທດ 5 ຄັນ | = | 100.000 ກີບ |
| ຄ່າທຳນຽມ ໃບຢັ້ງຢືນພາຫະນະຂົນສົ່ງພາຍໃນປະເທດ 10 ຄັນ | = | 100.000 ກີບ |
| **ລວມຄ່າທຳນຽມ ແລະ ບໍລິການທີ່ກົມໄປສະນີເກັບ** | = | **3.790.000 ກີບ** |

ຂ. ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງອັດຕະປື ເກັບ:

| | | |
|---|---|---|
| - ຄ່າທຳນຽມ ໃບຢັ້ງຢືນ ສູນຄັດແຍກພາຍໃນແຂວງ 1 ສູນ | = | 15.000 ກີບ |
| - ຄ່າທຳນຽມ ໃບຢັ້ງຢືນ ປ່ອງບໍລິການສາຂາຢູ່ແຂວງ 20 ປ່ອງ | = | 200.000 ກີບ |
| - ຄ່າທຳນຽມ ໃບຢັ້ງຢືນ ພາຫະນະແຈກຢາຍລົດໃຫຍ່ 2 ຄັນ | = | 6.000 ກີບ |
| - ຄ່າທຳນຽມ ໃບຢັ້ງຢືນ ພາຫະນະແຈກຢາຍລົດຈັກ 5 ຄັນ | = | 5.000 ກີບ |
| - ຄ່າທຳນຽມ ໃບຢັ້ງຢືນ ພະນັກງານແຈກຢາຍ 10 ຄົນ | = | 10.000 ກີບ |
| - ຄ່າບໍລິການ ໃບຢັ້ງຢືນ ສູນຄັດແຍກພາຍໃນແຂວງ 1 ສູນ | = | 20.000 ກີບ |
| - ຄ່າບໍລິການ ໃບຢັ້ງຢືນ ປ່ອງບໍລິການສາຂາ 20 ປ່ອງ | = | 200.000 ກີບ |
| - ຄ່າບໍລິການ ໃບຢັ້ງຢືນ ພາຫະນະແຈກຢາຍລົດໃຫຍ່ 2 ຄັນ | = | 6.000 ກີບ |
| - ຄ່າບໍລິການ ໃບຢັ້ງຢືນ ພາຫະນະແຈກຢາຍລົດຈັກ 5 ຄັນ | = | 5.000 ກີບ |
| - ຄ່າບໍລິການ ໃບຢັ້ງຢືນ ພະນັກງານແຈຍາຍ 10 ຄົນ | = | 10.000 ກີບ |
| **ລວມຄ່າທຳນຽມ ແລະ ຄ່າບໍລິການ ທີ່ແຂວງອັດຕະປື ເກັບ** | = | **477.000 ກີບ** |

***ກໍລະນີ 2:*** ບໍລິສັດທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດຢູ່ແຂວງໃດໜຶ່ງ (express, logistic) ທີ່ໄດ້ຂະ ຫຍາຍສາຂາ ແລະ ມີຕົວແທນໃຫ້ບໍລິການຂອງຕົນຢູ່ແຂວງອື່ນ ຈະຕ້ອງໄດ້ເສຍຄ່າທຳນຽມ ແລະ ຄ່າບໍລິ ການໃຫ້ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງທີ່ອະນຸຍາດດຳເນີນທຸລະກິດ ແລະ ແຂວງທີ່ຂະ ຫຍາຍສາຂາໄປດັ່ງນີ້:

ຕົວຢ່າງ 3: ບໍລິສັດ ມີໄຊຈັດສົ່ງດ່ວນ ໄດ້ຮັບອະນຸຍາດດຳເນີນທຸລະກິດບໍລິການສົ່ງເຄື່ອງໂລຊິດສະຕິກໄປສະນີພາຍໃນແຂວງ ຈາກແຂວງສະຫວັນນະເຂດ ແລະ ຂະຫຍາຍສາຂາ ໄປແຂວງອັດຕະປື (ຜູ້ປະກອບການພາຍໃນແຂວງ ແລະ ໄດ້ຂະຫຍາຍສາຂາໄປແຂວງອື່ນ).

- ♦ **ຄ່າທຳນຽມ ແລະ ຄ່າບໍລິການທີ່ຕ້ອງຈ່າຍປົກກະຕິໃນແຕ່ລະປີ**

**ກ. ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງສະຫວັນນະເຂດ ເກັບ:**

| | | |
|---|---|---|
| - ຄ່າທຳນຽມ ໃບອະນຸຍາດດຳເນີນທຸລະກິດ ສົ່ງເຄື່ອງພາຍໃນແຂວງ | = | 50.000 ກີບ |
| - ຄ່າທຳນຽມ ໃບຢັ້ງຢືນ ສູນຄັດແຍກລະຫວ່າງແຂວງ 1 ສູນ | = | 25.000 ກີບ |
| - ຄ່າທຳນຽມ ໃບຢັ້ງຢືນ ສູນຄັດແຍກພາຍໃນແຂວງ 1 ສູນ | = | 15.000 ກີບ |
| - ຄ່າທຳນຽມ ໃບຢັ້ງຢືນ ປ່ອງບໍລິການສາຂາຢູ່ແຂວງສະຫວັນນະເຂດ 20 ປ່ອງ | = | 200.000 ກີບ |
| - ຄ່າທຳນຽມ ໃບຢັ້ງຢືນ ພາຫະນະຂົນສົ່ງລົດໃຫຍ່ລະຫວ່າງແຂວງ 2 ຄັນ | = | 14.000 ກີບ |
| - ຄ່າທຳນຽມ ໃບຢັ້ງຢືນ ພາຫະນະແຈກຢາຍລົດໃຫຍ່ 2 ຄັນ | = | 6.000 ກີບ |
| - ຄ່າທຳນຽມ ໃບຢັ້ງຢືນ ພາຫະນະແຈກຢາຍລົດຈັກ 5 ຄັນ | = | 5.000 ກີບ |
| - ຄ່າທຳນຽມ ໃບຢັ້ງຢືນ ພະນັກງານແຈກຢາຍ 10 ຄົນ | = | 10.000 ກີບ |

- ຄ່າບໍລິການ ຜູ້ປະກອບການສິ່ງເຄື່ອງໂລຊິດສະຕິກພາຍໃນແຂວງ = 90.000 ກີບ
- ຄ່າບໍລິການ ໃບຢັ້ງຢືນ ສູນຄັດແຍກພາຍໃນແຂວງ 1 ສູນ = 20.000 ກີບ
- ຄ່າບໍລິການ ໃບຢັ້ງຢືນ ປ່ອງບໍລິການສາຂາຢູ່ແຂວງ 20 ປ່ອງ = 200.000 ກີບ
- ຄ່າບໍລິການ ໃບຢັ້ງຢືນ ພາຫະນະແຈກຢາຍລົດໃຫຍ່ 2 ຄັນ = 10.000 ກີບ
- ຄ່າບໍລິການ ໃບຢັ້ງຢືນ ພາຫະນະແຈກຢາຍລົດຈັກ 5 ຄັນ = 7.500 ກີບ
- ຄ່າບໍລິການ ໃບຢັ້ງຢືນ ພະນັກງານແຈກຢາຍ 10 ຄົນ = 10.000 ກີບ

ລວມຄ່າທຳນຽມ ແລະ ບໍລິການທີ່ແຂວງສະຫວັນນະເຂດເກັບ = **662.500** ກີບ

ຂ. ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງອັດຕະປື

- ຄ່າທຳນຽມ ອອກໃບອະນຸຍາດສິ່ງເຄື່ອງພາຍໃນແຂວງ = 50.000 ກີບ
- ຄ່າທຳນຽມ ໃບຢັ້ງຢືນ ສູນຄັດແຍກພາຍໃນແຂວງ 1 ສູນ = 15.000 ກີບ
- ຄ່າທຳນຽມ ໃບຢັ້ງຢືນ ປ່ອງບໍລິການສາຂາຢູ່ແຂວງ 20 ປ່ອງ = 200.000 ກີບ
- ຄ່າທຳນຽມ ໃບຢັ້ງຢືນ ພາຫະນະແຈກຢາຍລົດໃຫຍ່ 2 ຄັນ = 6.000 ກີບ
- ຄ່າທຳນຽມ ໃບຢັ້ງຢືນ ພາຫະນະແຈກຢາຍລົດຈັກ 5 ຄັນ = 5.000 ກີບ
- ຄ່າທຳນຽມ ໃບຢັ້ງຢືນ ພະນັກງານແຈກຢາຍ 10 ຄົນ = 10.000 ກີບ

- ຄ່າບໍລິການ ສິ່ງເຄື່ອງໂລຊິດສະຕິກພາຍໃນແຂວງ = 90.000 ກີບ
- ຄ່າບໍລິການ ໃບຢັ້ງຢືນ ສູນຄັດແຍກພາຍໃນແຂວງ 1 ສູນ = 20.000 ກີບ
- ຄ່າບໍລິການ ໃບຢັ້ງຢືນ ປ່ອງບໍລິການສາຂາຢູ່ແຂວງ 20 ປ່ອງ = 200.000 ກີບ
- ຄ່າບໍລິການ ໃບຢັ້ງຢືນ ພາຫະນະແຈກຢາຍລົດໃຫຍ່ 2 ຄັນ = 10.000 ກີບ
- ຄ່າບໍລິການ ໃບຢັ້ງຢືນ ພາຫະນະແຈກຢາຍລົດຈັກ 5 ຄັນ = 7.500 ກີບ
- ຄ່າບໍລິການ ໃບຢັ້ງຢືນ ພະນັກງານແຈກຢາຍ 10 ຄົນ = 10.000 ກີບ

ລວມຄ່າທຳນຽມ ແລະ ຄ່າບໍລິການ ທີ່ແຂວງອັດຕະປື ເກັບ = **483.500** ກີບ

ຕົວຢ່າງ 4: ບໍລິສັດ Hero Delivery-Food Panda (Franchise ຕ່າງປະເທດ) ໄດ້ຮັບອະນຸຍາດສິ່ງເຄື່ອງໄປສະນີ (ແຈກຢາຍອາຫານ) ພາຍໃນແຂວງ ຈາກນະຄອນຫຼວງ ແລະ ຂະຫຍາຍສາຂາໄປແຂວງອັດຕະປື.

♦ **ຄ່າທຳນຽມ ແລະ ຄ່າບໍລິການທີ່ຕ້ອງຈ່າຍປົກກະຕິໃນແຕ່ລະປີ**

ເນື່ອງຈາກບໍລິສັດ Hero Delivery ເປັນ Franchise ຂອງຕ່າງປະເທດ ທີ່ໄດ້ຮັບອະນຸຍາດເປັນຕົວແທນບໍລິການຈາກບໍລິສັດແມ່ຂອງຕ່າງປະເທດ ຊຶ່ງຂຶ້ນກັບການຄຸ້ມຄອງຂອງກົມ ດັ່ງນັ້ນຕ້ອງໄດ້ຮັບອະນຸຍາດດຳເນີນທຸລະກິດບໍລິການ ເປັນຕົວແທນຂອງບໍລິສັດສິ່ງເຄື່ອງຂະແໜງການໄປສະນີຕ່າງປະເທດຢູ່ລາວ ຈາກກົມໄປສະນີ ຈຶ່ງຕ້ອງໄດ້ເກັບຄ່າທຳນຽມ ແລະ ຄ່າບໍລິການ ດັ່ງນີ້:

ກ. ກົມໄປສະນີເກັບ:

- ຄ່າທຳນຽມ ໃບອະນຸຍາດດຳເນີນທຸລະກິດ ຕົວແທນຂອງບໍລິສັດສິ່ງເຄື່ອງຂະແໜງການໄປສະນີຕ່າງປະເທດຢູ່ລາວ = 200.000 ກີບ
- ຄ່າທຳນຽມ ອະນຸຍາດດຳເນີນທຸລະກິດສິ່ງເຄື່ອງໄປສະນີພາຍໃນປະເທດ = 50.000 ກີບ
- ຄ່າທຳນຽມ ໃບຢັ້ງຢືນ ສູນຄັດແຍກພາຍໃນປະເທດ (ສູນຄວບຄຸມ) = 25.000 ກີບ

- ຄ່າບໍລິການ ຜູ້ປະກອບສິ່ງເຄື່ອງໄປສະນີພົນພາຍໃນປະເທດ = 100.000 ກີບ

- ຄ່າທຳນຽມ ໃບຢັ້ງຢືນ ສູນຄັດແຍກພາຍໃນປະເທດ (ສູນຄວບຄຸມ) = 50.000 ກີບ

ລວມຄ່າທຳນຽມ ແລະ ຄ່າບໍລິການ ທີ່ກົມຈະເກັບ = **425.000 ກີບ**

໒. ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງນະຄອນຫຼວງ:

- ຄ່າທຳນຽມ ໃບອະນຸຍາດດຳເນີນທຸລະກິດຂໍ້ມູນຂ່າວສານແລະສິ່ງອຳນວຍສະດວກ = 50.000 ກີບ
- ຄ່າທຳນຽມ ໃບອະນຸຍາດດຳເນີນທຸລະກິດ ສິ່ງເຄື່ອງພາຍໃນແຂວງ = 50.000 ກີບ
- ຄ່າທຳນຽມ ໃບຢັ້ງຢືນ ສູນຄັດແຍກພາຍໃນແຂວງ 1 ສູນ = 15.000 ກີບ
- ຄ່າທຳນຽມ ໃບຢັ້ງຢືນ ພາຫະນະແຈກຢາຍລົດຈັກ 5 ຄັນ = 5.000 ກີບ
- ຄ່າທຳນຽມ ໃບຢັ້ງຢືນ ພະນັກງານແຈກຢາຍ 10 ຄົນ = 10.000 ກີບ

- ຄ່າບໍລິການ ບໍລິການຂໍ້ມູນຂ່າວສານ ແລະ ສິ່ງອຳນວຍສະດວກ = 80.000 ກີບ
- ຄ່າບໍລິການ ຜູ້ປະກອບສິ່ງເຄື່ອງໄປສະນີພັນ (ພາຍໃນແຂວງ) = 50.000 ກີບ
- ຄ່າບໍລິການ ໃບຢັ້ງຢືນ ສູນຄັດແຍກພາຍໃນແຂວງ 1 ສູນ (ສູນບັນຊາການ) = 15.000 ກີບ
- ຄ່າບໍລິການ ໃບຢັ້ງຢືນພາຫະນະແຈກຢາຍລົດຈັກ 5 ຄັນ = 7.500 ກີບ
- ຄ່າບໍລິການ ໃບຢັ້ງຢືນ ພະນັກງານແຈກຢາຍ 10 ຄັນ = 10.000 ກີບ

ລວມຄ່າທຳນຽມ ແລະ ບໍລິການ ທີ່ແຂວງນະຄອນຫຼວງ ເກັບ = 292.500 ກີບ

໓. ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງອັດຕະປື

- ຄ່າທຳນຽມ ໃບອະນຸຍາດດຳທຸລະກິດສິ່ງເຄື່ອງພາຍໃນແຂວງ = 50.000 ກີບ
- ຄ່າທຳນຽມ ໃບຢັ້ງຢືນສູນຄັດແຍກພາຍໃນແຂວງ 1 ສູນ = 15.000 ກີບ
- ຄ່າທຳນຽມ ໃບຢັ້ງຢືນພາຫະນະແຈກຢາຍລົດຈັກ 5 ຄັນ = 5.000 ກີບ
- ຄ່າທຳນຽມ ໃບຢັ້ງຢືນພະນັກງານແຈກຢາຍ 10 ຄົນ = 10.000 ກີບ

- ຄ່າບໍລິການ ຜູ້ປະກອບການສິ່ງເຄື່ອງໄປສະນີພາຍໃນແຂວງ = 50.000 ກີບ
- ຄ່າບໍລິການ ໃບຢັ້ງຢືນ ສູນຄັດແຍກພາຍໃນແຂວງ 1 ສູນ = 20.000 ກີບ
- ຄ່າບໍລິການ ໃບຢັ້ງຢືນ ພາຫະນະແຈກຢາຍລົດຈັກ 5 ຄັນ = 7.500 ກີບ
- ຄ່າບໍລິການ ໃບຢັ້ງຢືນ ພະນັກງານແຈກຢາຍ 10 ຄັນ = 10.000 ກີບ

ລວມຄ່າທຳນຽມ ແລະ ບໍລິການ ທີ່ແຂວງອັດຕະປື ເກັບ = **167.500 ກີບ**

**<u>ກໍລະນີ 3:</u>** ບໍລິສັດທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດພາຍໃນແຂວງໃດໜຶ່ງ (express, logistic, Delivery) ຈະຕ້ອງໄດ້ເສຍຄ່າທຳນຽມ ແລະ ບໍລິການໃຫ້ແກ່ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງດັ່ງກ່າວ ດັ່ງນີ້:

ຕົວຢ່າງ 5: ບໍລິສັດ Me express ຈັດສົ່ງດ່ວນ ໄດ້ຮັບອະນຸຍາດດຳເນີນທຸລະກິດສິ່ງເຄື່ອງໂລຊິດສະຕິກໄປສະນີພາຍໃນແຂວງ ຈາກແຂວງອັດຕະປື.

♦ ຄ່າທຳນຽມ ແລະ ຄ່າບໍລິການທີ່ຕ້ອງຈ່າຍປົກກະຕິໃນແຕ່ລະປີ:

- ຄ່າທຳນຽມ ໃບອະນຸຍາດດຳເນີນທຸລະກິດ ສິ່ງເຄື່ອງພາຍໃນແຂວງ = 50.000 ກີບ
- ຄ່າທຳນຽມ ໃບຢັ້ງຢືນ ສູນຄັດແຍກພາຍໃນແຂວງ 1 ສູນ = 15.000 ກີບ
- ຄ່າທຳນຽມ ໃບຢັ້ງຢືນ ປ່ອງບໍລິການສາຂາຢູ່ແຂວງ 20 ປ່ອງ = 200.000 ກີບ

| | | |
|---|---|---|
| - ຄ່າທຳນຽມ ໃບຢັ້ງຢືນ ພາຫະນະແຈກຢາຍລົດໃຫຍ່ 2 ຄັນ | = | 6.000 ກີບ |
| - ຄ່າທຳນຽມ ໃບຢັ້ງຢືນ ພາຫະນະແຈກຢາຍລົດຈັກ 5 ຄັນ | = | 5.000 ກີບ |
| - ຄ່າທຳນຽມ ໃບຢັ້ງຢືນ ພະນັກງານແຈກຢາຍ 10 ຄົນ | = | 10.000 ກີບ |
| - ຄ່າບໍລິການ ຜູ້ປະກອບການສົ່ງເຄື່ອງໂລຊິດສະຕິກພາຍໃນແຂວງ | = | 90.000 ກີບ |
| - ຄ່າບໍລິການ ໃບຢັ້ງຢືນ ສູນຄັດແຍກພາຍໃນແຂວງ 1 ສູນ | = | 20.000 ກີບ |
| - ຄ່າບໍລິການ ໃບຢັ້ງຢືນ ປ່ອງບໍລິການສາຂາຢູ່ແຂວງ 20 ປ່ອງ | = | 200.000 ກີບ |
| - ຄ່າບໍລິການ ໃບຢັ້ງຢືນ ພາຫະນະແຈກຢາຍລົດໃຫຍ່ 2 ຄັນ | = | 10.000 ກີບ |
| - ຄ່າບໍລິການ ໃບຢັ້ງຢືນ ພາຫະນະແຈກຢາຍລົດຈັກ 5 ຄັນ | = | 7.500 ກີບ |
| - ຄ່າບໍລິການ ໃບຢັ້ງຢືນ ພະນັກງານແຈກຢາຍ 10 ຄົນ | = | 10.000 ກີບ |
| **ລວມຄ່າທຳນຽມ ແລະ ຄ່າບໍລິການ ທີ່ໃຫ້ແຂວງອັດຕະປື ເກັບ** | = | **617.000 ກີບ** |

ຕົວຢ່າງ 6: ບໍລິສັດ Gotedy Delivery ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດສົ່ງເຄື່ອງໄປສະນີພັນພາຍໃນແຂວງ (ແຈກຢາຍອາຫານ) ຈາກແຂວງອັດຕະປື.

♦ **ຄ່າທຳນຽມ ແລະ ຄ່າບໍລິການທີ່ຕ້ອງຈ່າຍປົກກະຕິໃນແຕ່ລະປີ:**

| | | |
|---|---|---|
| - ຄ່າທຳນຽມ ໃບອະນຸຍາດດຳເນີນທຸລະກິດສົ່ງເຄື່ອງພາຍໃນແຂວງ | = | 50.000 ກີບ |
| - ຄ່າທຳນຽມ ໃບຢັ້ງຢືນ ສູນຄັດແຍກພາຍໃນແຂວງ (ສູນບັນຊາການ) | = | 15.000 ກີບ |
| - ຄ່າທຳນຽມ ໃບຢັ້ງຢືນ ພາຫະນະແຈກຢາຍລົດຈັກ 5 ຄັນ | = | 5.000 ກີບ |
| - ຄ່າທຳນຽມ ໃບຢັ້ງຢືນ ພະນັກງານແຈກຢາຍ 10 ຄົນ | = | 10.000 ກີບ |
| - ຄ່າບໍລິການສົ່ງເຄື່ອງໄປສະນີພັນ (ສິ່ງຂອງທົ່ວໄປ) ພາຍໃນແຂວງ | = | 50.000 ກີບ |
| - ຄ່າບໍລິການອອກໃບຢັ້ງຢືນພາຫະນະແຈກຢາຍລົດຈັກ 5 ຄັນ | = | 7.500 ກີບ |
| - ຄ່າບໍລິການອອກໃບຢັ້ງຢືນພະນັກງານແຈກຢາຍ 10 ຄົນ | = | 10.000 ກີບ |
| ລວມຄ່າທຳນຽມ ແລະ ຄ່າບໍລິການ ທີ່ແຂວງອັດຕະປື ເກັບ | = | **147.500 ກີບ** |

## 8. ຄຳແນະນຳເພີ່ມ

### 8.1. ອະທິບາຍບາງຄຳສັບ

- ປ່ອງບໍລິການໄປສະນີ ຫຼື ປ່ອງບໍລິການສາຂາຂອງຜູ້ປະກອບການທີ່ໄດ້ຮັບອະນຸຍາດແລ້ວ ແມ່ນຈຸດບໍລິການ ຂອງບໍລິສັດທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດບໍລິການດ້ານໄປສະນີ ຊຶ່ງໄດ້ຂະຫຍາຍການບໍລິການຂອງຕົນ ໂດຍບໍ່ຈຳເປັນຕ້ອງໄດ້ໄປຂໍຂຶ້ນທະບຽນວິສາຫະກິດຈາກຂະແໜງການຄ້າ ແລະ ອະນຸຍາດດຳເນີນທຸລະກິດບໍລິການ ຈາກພະແນກເຕັກໂນໂລຊີ ແລະ ການສື່ສານ ຕື່ມອີກ.
- ຕົວແທນຂອງຜູ້ປະກອບການຂະແໜງການໄປສະນີ ຫຼື ເຟຣນຊາຍ ແມ່ນຫົວໜ່ວຍທຸລະກິດ ທີ່ຕ້ອງໄດ້ຂໍຂຶ້ນທະບຽນວິສາຫະກິດຈາກຂະແໜງການຄ້າ ແລະ ໃບອະນຸຍາດດຳເນີນທຸລະກິດບໍລິການໄປສະນີຈາກຂະແໜງການໄປສະນີ ໂດຍໄດ້ຮັບສິດໃຫ້ເປັນຕົວແທນ ຫຼື ເຟຣນຊາຍ ໃຫ້ບໍລິການຕໍ່ ຈາກບໍລິສັດໃດໜຶ່ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດມາກ່ອນແລ້ວ.
- ສາຂາ ໝາຍເຖິງ ປ່ອງບໍລິການ ຫຼື ຕົວແທນບໍລິການ ຂອງບໍລິສັດໃດໜຶ່ງ ທີ່ໄດ້ຂະຫຍາຍການບໍລິການຂອງຕົນອອກໄປຕາມແຂວງ, ເມືອງ ແລະ ບ້ານ.

**8.2.** ແນະນຳວິທີຈັດເກັບຄ່າທຳນຽມ ແລະ ຄ່າບໍລິການ

ການແຈ້ງ, ການມອບ ແລະ ການນຳໃຊ້ ຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ປະຕິບັດຕາມມາດຕາ 9, ມາດຕາ 10 ແລະ ມາດຕາ 11 ພາກທີ II ໝວດ 2 ຂອງລັດຖະບັນຍັດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ, ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021.

**8.3.** ຂໍ້ຫ້າມ

ຂໍ້ຫ້າມສຳລັບອົງການຄຸ້ມຄອງ, ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ຂອງຂະແໜງການໄປສະນີ ທີ່ຮັບຜິດຊອບເກັບ ແລະ ຄຸ້ມຄອງລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ, ຂໍ້ຫ້າມສຳລັບຜູ້ເສຍ ແລະ ຜູ້ມອບຄ່າທຳນຽມ ແລະ ຄ່າບໍລິການຂະແໜງການໄປສະນີ ໃຫ້ປະຕິບັດຕາມມາດຕາ 54, ມາດຕາ 55 ແລະ ມາດຕາ 56 ພາກທີ່ IX ຂອງລັດຖະບັນຍັດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ, ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021.

ຫົວໜ້າກົມ

ກະຊວງເຕັກໂນໂລຊີ ແລະ ການສື່ສານ

ກົມໄປສະນີ

ພົນປະສິດ ພົດສະໄໝ